# ຄຳຖາມສຳຄັນ: ຂໍ້ມູນທີ່ເນັ້ນໃສ່ຄ່າໃຊ້ຈ່າຍຮ່ວມໃນ Family Care ຫຼື IRIS (Include, Respect, I Self-Direct)

## ຄ່າໃຊ້ຈ່າຍຮ່ວມແມ່ນຫຍັງ?

ບາງທ່ານທີ່ເຂົ້າຮ່ວມໃນໂຄງການ Medicaid ເຊັ່ນ Family Care (ໂຄງການດູແລໃນຄອບຄົວ) ແລະ IRIS (ການລວມ, ການນັບຖື, ຂ້າພະເຈົ້າບົງການດ້ວຍຕົນເອງ) ອາດຕ້ອງອອກຄ່າບໍລິການບາງສ່ວນ. ນີ້ເອີ້ນວ່າ ຄ່າໃຊ້ຈ່າຍຮ່ວມ.

## ເມື່ອໃດທີ່ຕ້ອງຈ່າຍຄ່າໃຊ້ຈ່າຍຮ່ວມ?

ຖ້າທ່ານມີຄ່າໃຊ້ຈ່າຍຮ່ວມ, ທ່ານຈະຈ່າຍຄ່າໃຊ້ຈ່າຍຮ່ວມເຕັມເດືອນໂດຍເລີ່ມຈາກເດືອນທີ່ທ່ານເຂົ້າຮ່ວມໃນ Family Care ຫຼື IRIS.

## ຈຳນວນເງິນຄ່າໃຊ້ຈ່າຍຮ່ວມຖືກຄຳນວນແນວໃດ?

ຈຳນວນເງິນຄ່າໃຊ້ຈ່າຍຮ່ວມຂອງທ່ານຈະອີງໃສ່ປັດໃຈຫຼາຍຢ່າງລວມເຖິງລາຍໄດ້ກ່ອນຫັກພາສີຂອງທ່ານ, ສະຖານະພາບສົມລົດຂອງທ່ານ, ການເປັນຢູ່ຂອງທ່ານ ແລະ ເຄຣດິດອື່ນໆທີ່ໄດ້ຮັບອະນຸຍາດໃນໂຄງການ Medicaid. ຫ້ອງການຮັກສາລາຍໄດ້ຈະເປັນຜູ້ຕັດສິນຈຳນວນເງິນຄ່າໃຊ້ຈ່າຍຮ່ວມຂອງທ່ານ. Aging and Disability Resource Center (ສູນຊັບພະຍາກອນສຳລັບຄວາມຊະລາ ແລະ ຄວາມພິການ) ຈະບອກຈຳນວນເງິນຄ່າໃຊ້ຈ່າຍຮ່ວມທີ່ຄາດຄະເນເອົາກ່ອນການລົງທະບຽນເຂົ້າຮ່ວມໂຄງການຂອງທ່ານ.

## ທີ່ຢູ່ອາໄສຂອງຂ້າພະເຈົ້າມີຜົນກະທົບຕໍ່ການຄຳນວນຂອງຂ້າພະເຈົ້າຫຼືບໍ່?

ມີ, ຜູ້ທີ່ຢູ່ໃນສະຖານທີ່ພັກອາໄສທີ່ອີງໃສ່ຊຸມຊົນ (Community Based Residential Facility) , ເຮືອນພັກອາໄສສຳລັບຜູ້ໃຫຍ່ (Adult Family Home) ຫຼື ຫ້ອງຊຸດທີ່ມີການດູແລສຳລັບຜູ້ອາໄສ (Residential Care Apartment Complex), ອາດໃຊ້ຄ່າໃຊ້ຈ່າຍ/ຄ່າທີ່ຢູ່ອາໄສໃນການຫຼຸດຄ່າໃຊ້ຈ່າຍຮ່ວມລົງ.

ທ່ານທີ່ອາໄສຢູ່ໃນເຮືອນ, ບໍ່ວ່າຈະເປັນເຈົ້າຂອງ ຫຼື ຜູ້ເຊົ່າອາດມີຄ່າໃຊ້ຈ່າຍທີ່ຈະມີຜົນກະທົບກັບຄ່າໃຊ້ຈ່າຍຮ່ວມກໍໄດ້. ບັນດາຄ່າໃຊ້ຈ່າຍເຫຼົ່ານີ້ລວມເຖິງຄ່າເຊົ່າເຮືອນ ຫຼື ຄ່າຈຳນອງ, ຄ່າປະກັນໄພຂອງຜູ້ເຊົ່າ ຫຼື ເຈົ້າຂອງເຮືອນ, ພາສີອະສັງຫາລິມະຊັບ ແລະ ຄ່າສາທາລະນູປະໂພກສຳລັບການເຮັດຄວາມຮ້ອນ, ນ້ຳ, ການກຳຈັດນ້ຳເສຍ ແລະ ໄຟຟ້າ.

ທ່ານທີ່ອາໄສຢູ່ໃນສະຖານພະຍາບານ, ແລະ ມີເຮືອນ ຫຼື ຫ້ອງຊຸດອາດຈະສາມາດຮັບເຄຣດິດສຳລັບຄ່າບຳລຸງຮັກສາເຮືອນ ຖ້າທ່ານໝໍຂອງເຂົາເຈົ້າຮັບຮອງວ່າເຂົາເຈົ້າຈະໄດ້ກັບໄປຢູ່ເຮືອນພາຍໃນຫົກເດືອນ ແລະ ຄູ່ສົມລົດຂອງເຂົາເຈົ້າບໍ່ໄດ້ອາໄສຢູ່ໃນເຮືອນນັ້ນ.

## ງົບປະມານຄວາມຈຳເປັນສ່ວນຕົວແມ່ນຫຍັງ?

ແຕ່ລະທ່ານໄດ້ຮັບອະນຸຍາດໃຫ້ເກັບເງິນລາຍໄດ້ບາງສ່ວນເພື່ອໃຊ້ຈ່າຍສ່ວນຕົວ. ເງິນນີ້ເອີ້ນວ່າງົບປະມານຄວາມຈຳເປັນສ່ວນຕົວ. ສູນຊັບພະຍາກອນສຳລັບຄວາມຊະລາ ແລະ ຄວາມພິການສາມາດຊ່ວຍທ່ານຮຽນຮູ້ກ່ຽວກັບຈຳນວນເງິນງົບປະມານຄວາມຈຳເປັນສ່ວນຕົວ.

## ໃຜແດ່ທີ່ໄດ້ຮັບການຈ່າຍເງິນຄ່າໃຊ້ຈ່າຍສ່ວນຕົວ?

ຜູ້ທີ່ເຂົ້າຮ່ວມໃນ Family Care ສົ່ງເງິນຄ່າໃຊ້ຈ່າຍຮ່ວມໂດຍກົງໃຫ້ອົງກອນການດູແລແບບຈັດບໍລິການ (MCO) ທີ່ເຂົາເຈົ້າເຂົ້າຮ່ວມ. ຜູ້ທີ່ເຂົ້າຮ່ວມໃນໂຄງການ IRIS, ສົ່ງຄ່າໃຊ້ຈ່າຍຮ່ວມໃຫ້ກັບຕົວແທນນາຍຈ້າງທາງການເງິນ (FEA) ຂອງເຂົາເຈົ້າ.

## ມີຫຍັງເກີດຂຶ້ນກັບຄ່າໃຊ້ຈ່າຍຮ່ວມເມື່ອບຸກຄົນປ່ຽນໂຄງການ ຫຼື ຕົວແທນທີ່ປຶກສາຂອງ MCO ຫຼື IRIS ໃນເດືອນດຽວກັນ?

ຜູ້ຄົນສາມາດເລືອກປ່ຽນໂຄງການ ຫຼື ອອກຈາກໂຄງການດູແລແບບຈັດບໍລິການ ຫຼື ໂຄງການ IRIS ເວລາໃດກໍ່ໄດ້. ຖ້າບຸກຄົນໄດ້ຈ່າຍເງິນຄ່າໃຊ້ຈ່າຍຮ່ວມໃຫ້ໂຄງການປະຈຸບັນໄປແລ້ວ ແລ້ວຫຼັງຈາກນັ້ນໄດ້ເລືອກທີ່ຈະປ່ຽນໄປເຂົ້າໂຄງການອື່ນ ຫຼື ໄປເຂົ້າຮ່ວມກັບ MCO ຫຼື ຕົວແທນທີ່ປຶກສາຂອງ IRIS ຜູ້ໃໝ່, ບໍ່ຈຳເປັນຕ້ອງຈ່າຍເງິນເພີ່ມເຕີມ. ຄ່າໃຊ້ຈ່າຍຮ່ວມສາມາດເກັບໄດ້ພຽງໜຶ່ງຄັ້ງຕໍ່ເດືອນ.